**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ສັນຕິບານ

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ

ເລກທີ...703.../ກຄມ

ນະຄອນຫຼວງວຽງຈັນ, ວັນທີ.30...ມີ.ນາ.2020.

## ແຈ້ງການ

**ເຖິງ:** ບັນດາ ດ່ານຕຳຫຼວດກວດຄົນເຂົ້າ-ອອກເມືອງ ສາກົນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ໃນໄລຍະການຕ້ານພະຍາດ ໂຄວິດ-19 (COVID-19)

- ອີງຕາມ ຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19);
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 084/ປກສ, ລົງວັນທີ 03 ກຸມພາ 2010 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ;
- ອີງຕາມ ທິດຊີ້ນຳຂອງ ຄະນະນຳກົມໃຫຍ່ສັນຕິບານ ກໍຄືກະຊວງປ້ອງກັນຄວາມສະຫງົບ ໃນຄັ້ງວັນທີ 29 ມີນາ 2020.

ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນປັດຈຸບັນ ພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ ໂຄໂຣນາ ໄວຣັສ ຫຼື ໂຄວິດ-19 (COVID-19) ຍັງສືບຕໍ່ແຜ່ລະບາດຢ່າງໜັກໜ່ວງ, ຈຳນວນຜູ້ຕິດເຊື້ອ ແລະ ຜູ້ເສຍຊີວິດຈາກພະຍາດດັ່ງກ່າວຢູ່ຫຼາຍປະເທດ ກໍມີຈຳນວນເພີ່ມຂຶ້ນທຸກມື້. ໃນ ສປປ ລາວ ກໍກວດພົບຜູ້ຕິດເຊື້ອແລ້ວ ຈຳນວນໜຶ່ງ ແລະມີຄວາມສ່ຽງທີ່ຈະເກີດການແຜ່ລະບາດໃນທົ່ວປະເທດ. ເພື່ອເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດດັ່ງກ່າວ, ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຈຶ່ງອອກມາດຕະການຄຸ້ມຄອງຢ່າງເຂັ້ມງວດ ໃນການເດີນທາງເຂົ້າ-ອອກ ສປປ ລາວ ຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ ຜ່ານບັນດາດ່ານສາກົນ ໃນຂອບເຂດທົ່ວປະເທດ, ໃຫ້ປະຕິບັດດັ່ງນີ້:

**I. ການເຂົ້າ-ອອກ ສປປ ລາວ ຂອງພົນລະເມືອງລາວ ແລະຄົນຕ່າງດ້າວ.**

**1. ຂາເຂົ້າ:**

- ອະນຸຍາດໃຫ້ເຂົ້າ ສຳລັບບຸກຄົນທີ່ຖືໜັງສືຜ່ານແດນ ການທູດ ແລະລັດຖະການ ທີ່ໄປປະຕິບັດວຽກຈຳເປັນຢູ່ຕ່າງປະເທດຕາມການແຕ່ງຕັ້ງ ຂອງການຈັດຕັ້ງທີ່ກ່ຽວຂ້ອງ, ພ້ອມກັນນັ້ນ ກໍຕ້ອງປະຕິບັດຕາມຂັ້ນຕອນ ແລະຄຳແນະນຳຂອງ ຂະແໜງສາທາລະນະສຸກ ປະຈຳດ່ານທີ່ເດີນທາງອອກ ແລະເດີນທາງເຂົ້າ ຢ່າງເຂັ້ມງວດ;
- ບຸກຄົນທີ່ດ່ານເຊິ່ງໜ້າອະນຸຍາດໃຫ້ອອກ ກໍອະນຸຍາດໃຫ້ເດີນທາງເຂົ້າ ສປປ ລາວ ໄດ້ ແຕ່ຕ້ອງມີໜັງສືຢັ້ງຢືນສຸຂະພາບ ຈາກແພດຂອງປະເທດທີ່ເດີນທາງອອກ ພ້ອມກັນນັ້ນເວລາເຂົ້າມາກໍຕ້ອງປະຕິບັດຕາມຂັ້ນຕອນ ແລະຄຳແນະນຳ ຂອງຂະແໜງສາທາລະນະສຸກປະຈຳດ່ານຂາເຂົ້າ ຢ່າງເຂັ້ມງວດ;
- ອະນຸຍາດໃຫ້ເດີນທາງເຂົ້າ ສຳລັບບຸກຄົນທີ່ເດີນທາງ ເພື່ອຈຸດປະສົງ ຂົນສົ່ງສິນຄ້າ ໂດຍອະນຸຍາດໃຫ້ເຂົ້າບໍ່ເກີນ 03 ຄົນ ລວມທັງຜູ້ຂັບລົດ ແລະຜູ້ຕິດຕາມ, ແຕ່ລະຄົນຕ້ອງມີໜັງສືຢັ້ງຢືນສຸຂະພາບຈາກແພດ ຂອງປະເທດເດີນທີ່ທາງອອກ, ພ້ອມກັນນັ້ນ ເວລາເຂົ້າມາກໍຕ້ອງປະຕິບັດຕາມຂັ້ນຕອນ ແລະຄຳແນະນຳ ຂອງຂະແໜງສາທາລະນະສຸກປະຈຳດ່ານຂາເຂົ້າ ຢ່າງເຂັ້ມງວດ.

2. ຂາອອກ:

- ອະນຸຍາດໃຫ້ອອກ ສໍາລັບບຸກຄົນທີ່ຖືໜັງສືຜ່ານແດນ ການທູດ, ລັດຖະການ ແລະອົງການຈັດຕັ້ງສາກົນ ອອກໃຫ້ ທີ່ໄປປະຕິບັດວຽກງານທີ່ຈໍາເປັນຢູ່ຕ່າງປະເທດ ຕາມການແຕ່ງຕັ້ງ ຂອງການຈັດຕັ້ງທີ່ກ່ຽວຂ້ອງ, ພ້ອມກັນນັ້ນ ກໍຕ້ອງປະຕິບັດຕາມລະບຽບການ ຂອງຂະແໜງສາທາລະນະສຸກປະເທດປາຍທາງ ຢ່າງເຂັ້ມງວດ;

- ບຸກຄົນທີ່ເດີນທາງ ອອກ ສປປ ລາວ ເພື່ອຈຸດປະສົງ ຂົນສົ່ງສິນຄ້າ ອະນຸຍາດໃຫ້ອອກບໍ່ເກີນ 03 ຄົນ ລວມທັງຜູ້ຂັບລົດ ແລະຜູ້ຕິດຕາມ, ແຕ່ຕ້ອງປະຕິບັດຕາມກົດໝາຍ ແລະລະບຽບການ ຂອງຂະແໜງສາທາລະນະສຸກ ປະຈໍາດ່ານຕົ້ນທາງ ແລະດ່ານປາຍທາງ ຢ່າງເຂັ້ມງວດ;

- ຜູ້ທີ່ໄປປິ່ນປົວສຸຂະພາບ ແມ່ນອະນຸຍາດ ກໍລະນີສຸກເສີນເທົ່ານັ້ນ ແຕ່ບໍ່ໃຫ້ເກີນ 04 ຄົນລວມທັງຜູ້ປ່ວຍ;

- ບໍ່ອະນຸຍາດໃຫ້ອອກ ສໍາລັບບຸກຄົນທີ່ເດີນທາງໄປເພື່ອຈຸດປະສົງ ເຊັ່ນ: ທ່ອງທ່ຽວ, ຢັ້ງມຢາມ, ວຽກທາງການ, ທຸລະກິດ ທີ່ບໍ່ຈໍາເປັນ ແລະອື່ນໆ;

- ປະຕິບັດຕາມ ມາດຕາ 13 ຂອງກົດໝາຍ ວ່າດ້ວຍ ການເຂົ້າ-ອອກ ແລະການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

II. **ການເຂົ້າ-ອອກ ສປປ ລາວ ຂອງຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ.**

1. ຂາເຂົ້າ:

- ອະນຸຍາດໃຫ້ເຂົ້າ ສໍາລັບບຸກຄົນທີ່ຖືໜັງສືຜ່ານແດນ ການທູດ, ລັດຖະການ ແລະອົງການຈັດຕັ້ງສາກົນ ອອກໃຫ້ ທີ່ມີວຽກຈໍາເປັນ ຕາມການແຕ່ງຕັ້ງ ຈາກການຈັດຕັ້ງຂອງຕົນ ແຕ່ຕ້ອງປະຕິບັດຕາມຂັ້ນຕອນ ແລະຄໍາແນະນໍາຂອງ ຂະແໜງສາທາລະນະສຸກປະຈໍາດ່ານຂາເຂົ້າ ຢ່າງເຂັ້ມງວດ;

- ບໍ່ອະນຸຍາດໃຫ້ເຂົ້າ ສປປ ລາວ ສໍາລັບບຸກຄົນ ທີ່ໄດ້ຮັບວີຊາເຂົ້າລາວທຸກປະເພດ ແລະບຸກຄົນທີ່ເປັນພົນລະເມືອງ ຂອງປະເທດທີ່ຍົກເວັ້ນວີຊາ ສອງຝ່າຍ, ຝ່າຍດຽວ ຕາມຄໍາສັ່ງ ຂອງ ທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020; ຍົກເວັ້ນການເດີນທາງເຂົ້າມາ ເພື່ອຈຸດປະສົງ ຂົນສົ່ງສິນຄ້າ, ເຄື່ອງອຸປະໂພກ ແລະບໍລິໂພກ, ຂົນສົ່ງນໍ້າມັນ ແລະຂົນສົ່ງສິ່ງອື່ນໆທີ່ຈໍາເປັນ (ບໍ່ເກີນ 03 ຄົນ ລວມທັງຜູ້ຂັບລົດ ແລະຜູ້ຕິດຕາມ) ໂດຍໃຫ້ເຈົ້າໜ້າທີ່ ຕມ ຮ່ວມກັບຂະແໜງການກ່ຽວຂ້ອງ ກວດກາສິ່ງຂອງທີ່ຈະຂົນສົ່ງເຂົ້າ-ອອກ ແລະຕ້ອງມີໜັງສືຢັ້ງຢືນສຸຂະພາບຈາກແພດຂອງປະເທດເດີນທາງອອກ, ພ້ອມກັນນັ້ນ ເວລາເຂົ້າມາກໍຕ້ອງປະຕິບັດຕາມຂັ້ນຕອນ ແລະຄໍາແນະນໍາ ຂອງຂະແໜງສາທາລະນະສຸກປະຈໍາດ່ານຂາເຂົ້າ ຢ່າງເຂັ້ມງວດ;

- ປະຕິບັດຕາມ ມາດຕາ 12 ຂອງກົດໝາຍ ວ່າດ້ວຍ ການເຂົ້າ-ອອກ ແລະການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

2. ຂາອອກ:

- ອະນຸຍາດໃຫ້ເດີນທາງອອກ ສໍາລັບບຸກຄົນທີ່ຖືໜັງສືຜ່ານແດນ ການທູດ, ລັດຖະການ ແລະອົງການຈັດຕັ້ງສາກົນ ອອກໃຫ້ ທີ່ມີວຽກຈໍາເປັນ ຕາມການແຕ່ງຕັ້ງ ຈາກການຈັດຕັ້ງຂອງຕົນ, ພ້ອມກັນນັ້ນ ກໍຕ້ອງປະຕິບັດຕາມລະບຽບການ ຂອງຂະແໜງສາທາລະນະສຸກປະເທດປາຍທາງ ຢ່າງເຂັ້ມງວດ;

- ອະນຸຍາດໃຫ້ບຸກຄົນເດີນທາງອອກ ສປປ ລາວ ແຕ່ຕ້ອງມີເອກະສານຢັ້ງຢືນເພື່ອເອົາຕົວຂອງພົນລະເມືອງຂອງເຂົາເຈົ້າກັບຄືນປະເທດ ຈາກທາງສະຖານເອກອັກຄະລັດຖະທູດ, ສະຖານກົງສຸນຂອງພວກກ່ຽວ ໂດຍຜ່ານກະຊວງການຕ່າງປະເທດ ຂອງລາວ;

- ປະຕິບັດຕາມ ມາດຕາ 13 ຂອງກົດໝາຍ ວ່າດ້ວຍ ການເຂົ້າ-ອອກ ແລະການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

ແຈ້ງການສະບັບນີ້ ຖືກນໍາໃຊ້ປ່ຽນແທນແຈ້ງການ ສະບັບເລກທີ 661/ກຕມ, ລົງວັນທີ 20 ມີນາ 2020, ມີຜົນບັງຄັບໃຊ້ນັບແຕ່ ວັນທີ 30 ມີນາ ເຖິງ 19 ເມສາ 2020 ແລະ ໃນກໍລະນີມີການປ່ຽນແປງ ຈະມີແຈ້ງການສະບັບອື່ນມາປ່ຽນແທນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ

ຜູ້ປະສານງານ:
ພັທ ເພັດດາວົງ ແກ້ວກັນຍາ 020 5552 6405
ຮທ ສຸກສາລັກ ທໍາມະວົງ 020 5679 6061

ສາຍສະໜິງ ສີວິໄລ